ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ຍທຂ PWT

ກະຊວງໂຍທາທິການ ແລະ ຂົນສົ່ງ

ເລກທີ 254 /ຍທຂ

ນະຄອນຫຼວງວຽງຈັນ, ວັນທີ 29 ເມສາ 2021

# ບົດລາຍງານ

ຮຽນ: ທ່ານຮອງນາຍົກລັດຖະມົນຕີ, ລັດຖະມົນຕີ ກະຊວງ ແຜນການ ແລະ ການລົງທຶນ, ທີ່ນັບຖື.

ເລື່ອງ: ລາຍງານ ການຈັດຕັ້ງປະຕິບັດ ການສະກັດກັ້ນ ເພື່ອຫຼຸດຜ່ອນຜົນກະທົບ ການລະບາດພະຍາດ COVID-19.

– ອີງຕາມ ຄຳສັ່ງຂອງນາຍົກລັດຖະມົນຕີ ວ່າດ້ວຍການເພີ່ມທະວີມາດຕະການສະກັດກັ້ນ, ຄວບຄຸມ ແລະ ກຽມຄວາມພ້ອມຮອບດ້ານ ເພື່ອຕ້ານພະຍາດ COVID-19 ສະບັບເລກທີ 15/ນຍ, ລົງວັນທີ 21/04/2021.
– ອີງຕາມແຈ້ງການຂອງຫ້ອງວ່າການສຳນັກງານນາຍົກລັດຖະມົນຕີ ເລກທີ 406/ຫສນຍ, ລົງວັນທີ 26/04/2021

ກະຊວງໂຍທາທິການ ແລະ ຂົນສົ່ງ ຂໍຖືເປັນກຽດ ລາຍງານກ່ຽວກັບການຈັດຕັ້ງປະຕິບັດຄຳສັ່ງ ສະບັບເລກທີ 15/ນຍ; ລົງວັນທີ 21/04/2021 ແລະ ແຈ້ງການຂອງ ຫສນຍ ສະບັບເລກທີ 406/ຫສນຍ, ລົງວັນທີ 26/04/2021 ໃນຊ່ວງທີ່ໄດ້ຮັບຜົນກະທົບຈາກການລະບາດຂອງພະຍາດໂຄວິດ-19 ໃນຮອບໃໝ່ ຂອງຂະແໜງການ ຍທຂ, ລະອຽດດັ່ງນີ້:

**I. ວຽກງານການຂົນສົ່ງ:**

ກະຊວງ ໂຍທາທິການ ແລະ ຂົນສົ່ງ ໄດ້ອອກນິຕິກຳ 2 ສະບັບ:

- ແຈ້ງການ ເລກທີ 242/ຍທຂ, ລົງວັນທີ 23/4/2021 ກ່ຽວກັບການຂົນສົ່ງໂດຍສານ ແລະ ສິນຄ້າຢູ່ ສປປ ລາວ ໃນໄລຍະສືບຕໍ່ປ້ອງກັນ, ຄວບຄຸມ ແລະ ແກ້ໄຂ ການລະບາດຂອງພະຍາດ ໂຄວິດ-19.
- ຄຳແນະນຳ ເລກທີ 8485/ຍທຂ, ລົງວັນທີ 27/4/2021 ກ່ຽວກັບການນຳໃຊ້ໜັງສືຄ້ຳປະກັນທາງດ້ານຄວາມປອດໄພຈາກ ໂຄວິດ-19.

1. ວຽກງານຂົນສົ່ງທາງບົກ:

1.1 ການຂົນສົ່ງພາຍໃນປະເທດ.

- ຢຸດຕິຊົ່ວຄາວການຂົນສົ່ງທາງນ້ຳ.
- ຢຸດຕິຊົ່ວຄາວການຂົນສົ່ງໂດຍສາຍພາຍໃນແຂວງ, ນະຄອນຫລວງ; ລະວ່າງແຂວງ-ແຂວງ, ແຂວງ ນະຄອນຫລວງ.
- ອະນຸຍາດໃຫ້ມີການຂົນສົ່ງສິນຄ້າພາຍໃນປະເທດຢ່າງເປັນປົກກະຕິ.

ມີບາງແຂວງໄດ້ອອກແຈ້ງການບໍ່ໃຫ້ການຂົນສົ່ງສິນຄ້າເຂົ້າ ແລະ ຜ່ານແຂວງດັ່ງກ່າວ ພ້ອມທັງອົງການປົກຄອງເມືອງ ແລະ ອຳນາດການປົກຄອງບ້ານ ສ່ວນຫລາຍ ກໍ່ໄດ້ມີການຫ້າມບໍ່ໃຫ້ມີການຂົນສົ່ງສິນຄ້າພາຍໃນເມືອງ ແລະ ບ້ານດັ່ງກ່າວ, ຊຶ່ງສ້າງຂອດຄວາມຫຍຸ້ງຍາກໃຫ້ແກ່ການຂົນສົ່ງພາຍໃນ ເຮັດໃຫ້ຜູ້ປະກອບການມີຄວາມຫຍຸ້ງຍາກໃນການຂົນສົ່ງສິນຄ້າພາຍໃນປະເທດ ຊຶ່ງບໍ່ສອດຄ່ອງກັບຄຳສັ່ງຂອງນາຍົກລັດຖະມົນຕີ ເລກທີ 15/ນຍ ແລະ ແຈ້ງການຂອງກະຊວງ ຍທຂ ເລກທີ 242/ຍທຂ.

1.2 ການຂົນສົ່ງສິນຄ້າລະຫວ່າງປະເທດ

- ຢູ່ດ່ານຊາຍແດນ ລາວ-ຈີນ ແລະ ລາວ-ຫວຽດນາມ ແມ່ນໄດ້ປະຕິບັດຢ່າງເປັນປົກກະຕິ ໂດຍລົດຂົນສົ່ງສິນຄ້າທີ່ສາມາດຄ່ຽນຖ່າຍໄດ້ແມ່ນເຂົ້າມາຮອດຈຸດຄ່ຽນຖ່າຍຢູ່ດ່ານສາກົນແລ້ວກໍ່ກັບຄືນທັນທີ, ສຳລັບລົດທີ່ທີ່ຕ້ອງຂົນສົ່ງສິນຄ້າຂອງໂຄງການລັດຖະບານ ແລະ ສິນຄ້າທີ່ບໍ່ສາມາດຄ່ຽນຖ່າຍໄດ້ ຊຶ່ງຕ້ອງໄດ້ຂົນສົ່ງໄປເຖິງຈຸດໝາຍປາຍທາງແມ່ນບັນດາໂຄງການ ແລະ ບໍລິສັດ ໄດ້ປ່ຽນຄົນຂັບລົດເປັນຄົນທີ່ອາໄສຢູ່ ສປປ ລາວ.
- ຢູ່ດ່ານຊາຍແດນ ລາວ-ໄທ ແມ່ນໄດ້ປະຕິບັດຢ່າງເປັນປົກກະຕິ ໂດຍລົດຂົນສົ່ງສິນຄ້າເຂົ້າມາຮອດຈຸດຄ່ຽນຖ່າຍແລ້ວກໍ່ກັບຄືນທັນທີ.

  ສຳລັບລົດທີ່ຕ້ອງຂົນສົ່ງສິນຄ້າຂອງໂຄງການ ແລະ ສິນຄ້າພິເສດ ເປັນຕົ້ນແມ່ນ: ນ້ຳມັນເຊື້ອໄຟຕ່າງໆ ທີ່ຕ້ອງໄດ້ຂົນສົ່ງໄປເຖິງຈຸດໝາຍປາຍທາງແມ່ນຍັງໃຊ້ຄົນຂັບລົດທີ່ຂັບເຂົ້າມາ ຊຶ່ງໄດ້ປະຕິບັດຕາມແຈ້ງການຂອງກະຊວງໂຍທາທິການ ແລະ ຂົນສົ່ງ ສະບັບເລກທີ 242/ຍທຂ, ລົງວັນທີ 23 ເມສາ 2021 ກ່ຽວກັບການຂົນສົ່ງໂດຍສານ ແລະ ສິນຄ້າ ຢູ່ ສປປ ລາວ ໃນໄລຍະສືບຕໍ່ປ້ອງກັນ, ຄວບຄຸມ ແລະ ແກ້ໄຂການລະບາດຂອງພະຍາດCOVID-19 ແຕ່ຕ້ອງຮັບປະກັນມາດຕາການ ເປັນຕົ້ນແມ່ນ:

  1) ມີຂະບວນນຳທາງລົດ
  2) ມີໃບຢັ້ງຢືນຜົນກວດໂຄວິດເປັນລົບຢ່າງໜ້ອຍ 72 ຊົ່ວໂມງ ແລະ ສາມາດໃຊ້ໄດ້ 7 ວັນ.
  3) ໃບຄ້ຳປະກັນຄວາມປອດໄພຈາກໂຄວິດຈາກ ເຈົ້າຂອງໂຄງການໃຫ້ແກ່ຄົນຂັບລົດ.

2. ການຂົນສົ່ງທາງລົດໄຟ:

- ຢຸດຕິຊົ່ວຄາວການຂົນສົ່ງໂດຍສານລະຫວ່າງ ລາວ-ໄທ-ລາວ
- ອະນຸຍາດໃຫ້ມີການຂົນສົ່ງ ສິນຄ້າ, ແຕ່ຕ້ອງປະຕິບັດເຂັ້ມງວດມາດຕາການຕາມແຈ້ງການ 242/ຍທຂ, ຕໍ່ກັບຄົນຂັບລົດໄຟເບື້ອງໄທ ເຂົ້າມາຄືກັບຄົນຂັບລົດຂົນສົ່ງສິນຄ້າ.

3. ວຽກງານຂົນສົ່ງທາງອາກາດ:

- ຢຸດຕິຊົ່ວຄາວການຂົນສົ່ງຜູ້ໂດຍສານທາງອາກາດ ພາຍໃນປະເທດທຸກເສັ້ນບິນ ຍົກເວັ້ນ ຖ້ຽວບິນມອບໝາຍຂົນສົ່ງສິນຄ້າທາງອາກາດ ແລະ ຖ້ຽວບິນຂົນສົ່ງຜູ້ໂດຍສານທາງອາກາດ ສຳລັບບຸກຄົນທີ່ມີຄວາມຈຳເປັນອັນຮີບດ່ວນທີ່ໄດ້ຮັບອະນຸຍາດໃຫ້ມີການເຄື່ອນຍ້າຍລະຫວ່າງແຂວງຕົ້ນທາງ ແລະ ແຂວງປາຍທາງຈາກ ຄະນະສະເພາະກິດໂຄວິດ-19 ທີ່ກ່ຽວຂ້ອງ (ຂັ້ນສູນກາງ ແລະ ທ້ອງຖິ່ນ) ນັບແຕ່ວັນທີ 22 ເມສາຫາ 05 ພຶດສະພາ 2021, ແຕ່ມີມາດຕະການການປະຕິບັດຖ້ຽວບິນຢ່າງເຄັ່ງຄັດ ເຊັ່ນ: ຈູບິນໃຫ້ໃສ່ຊຸດປ້ອງກັນ PPE ຕະຫລອດການເດີນທາງ ແລະ ຫ້າມອອກຈາກເຂດເຮືອບິນໂດຍເດັດຂາດ. ສຳລັບການຍົກເລີກຖ້ຽວບິນພາຍໃນຂອງ ລັດວິສາຫະກິດການບິນລາວ ໃນໄລຍະດັ່ງກ່າວ ແມ່ນມີຈຳນວນ 196 ຖ້ຽວ, ລາຍຮັບຈາກຖ້ຽວບິນດັ່ງກ່າວແມ່ນ 563.182 ໂດລາສະຫະລັດ (ບໍ່ສາມາດປະຕິບັດໄດ້ຕາມແຜນການ). ຄາດຄະເນກໍລະນີປິດເມືອງ (lock down)ສືບຕໍ່ໄປອີກສອງເດືອນຕໍ່ໜ້າ ( 22 ເມສາ - 30

ມິຖຸນາ 2021) ແມ່ນຈະໄດ້ຍົກເລີກຖ້ຽວບິນພາຍໃນ ຈໍານວນ 954 ຖ້ຽວ, ລາຍຮັບຈາກຖ້ຽວບິນດັ່ງກ່າວ ແມ່ນ 2.746.097 ໂດລາສະຫະລັດ.

- ສໍາລັບການປະຕິບັດຖ້ຽວບິນມອບເໝົາຂົນສົ່ງຜູ້ໂດຍສານ ແລະ ສິນຄ້າລະຫວ່າງປະເທດ (ເສັ້ນບິນຕ່າງປະເທດທີ່ເຊື່ອມຕໍ່ກັບ ສະໜາມບິນສາກົນວັດໄຕ ນະຄອນຫລວງວຽງຈັນ) ແມ່ນຍັງສືບຕໍ່ປະຕິບັດຄື:

1. ໃນເດືອນ ເມສາ (04) ປີ 2021, ມີຖ້ຽວບິນປະຕິບັດທັງໝົດຄື: ເສັ້ນບິນ ວຽງຈັນ, ສປປ ລາວ -ຄຸນໝິງ, ສປ ຈີນ ມີ 4 ຖ້ຽວບິນ ຕໍ່ ອາທິດ; ເສັ້ນບິນ ວຽງຈັນ, ສປປ ລາວ - ກວາງໂຈ, ສປ ຈີນ ມີ 1 ຖ້ຽວບິນ ຕໍ່ ອາທິດ; ເສັ້ນບິນ ວຽງຈັນ, ສປປ ລາວ - ຊີງຊີງ, ສປ ຈີນ ມີ 2 ຖ້ຽວບິນ ຕໍ່ ອາທິດ; ເສັ້ນບິນ ວຽງຈັນ, ສປປ ລາວ - ອິນຊອນ, ສ. ເກົາຫລີ ມີ 4 ຖ້ຽວບິນ ຕໍ່ ເດືອນ; ເສັ້ນບິນ ວຽງຈັນ, ສປປ ລາວ - ກົວລາລໍາເປີ, ປະເທດມາເລເຊຍ ມີ 4 ຖ້ຽວບິນຕໍ່ເດືອນ; ລວມ: 39 ຖ້ຽວບິນມອບເໝົາຂົນສົ່ງຜູ້ໂດຍສານທາງອາກາດ. ນອກຈາກນີ້, ມີຖ້ຽວບິນຂົນສົ່ງຜູ້ໂດຍສານສ່ວນຕົວ ແລະ ທາງການແພດ ລວມ 3 ຖ້ຽວບິນ; ສັງລວມແລ້ວ, ພາຍໃນເດືອນ ເມສາ ປີ 2021, ມີຖ້ຽວບິນມອບເໝົາຂົນສົ່ງຜູ້ໂດຍສານລະຫວ່າງປະເທດ ຈໍານວນ 42 ຖ້ຽວບິນ ແລະ ຖ້ຽວບິນມອບເໝົາຂົນສົ່ງສິນຄ້າທາງອາກາດ ລວມ 7 ຖ້ຽວບິນ;
2. ພ້ອມນີ້, ກະຊວງ ໂຍທາທິການ ແລະ ຂົນສົ່ງ ໂດຍສະເພາະ ກົມການບິນພົນລະເຮືອນ ໄດ້ປະຕິບັດມາດຕະການປ້ອງກັນ ແລະ ສະກັດກັ້ນ ທີ່ ອົງການການບິນພົນລະເຮືອນສາກົນ ແລະ ຄະນະສະເພາະກິດໂຄວິດ-19 (ຂັ້ນສູນກາງ) ວາງອອກຢ່າງເຄັ່ງຄັດ ເພື່ອຮັບປະກັນ ບໍ່ໃຫ້ ຜູ້ໂດຍສານທີ່ຕິດເຊື້ອສາມາດແຜ່ເຊື້ອເຂົ້າໃນຊຸມຊົນໄດ້ ໂດຍໄດ້ອອກ ແຈ້ງການ ເລກທີ 16 ສະບັບເລກທີ 0684/DCAL, ລົງວັນທີ 02 ເມສາ 2021ຊຶ່ງມີມາດຕະການໃຫ້ ຜູ້ໂດຍສານຕ່າງປະເທດ ຕ້ອງມີຜົນກວດເຊື້ອເປັນລົບ ກ່ອນຂຶ້ນເຮືອບິນ 72 ຊົ່ວໂມງ; ພາຍຫລັງມາເຖິງສະໜາມບິນສາກົນວັດໄຕ ຈະຕ້ອງໄດ້ກວດຫາເຊື້ອ PCR TEST; ຕ້ອງໄດ້ຊື້ປະກັນໄພ ແລະ ໂມງຕິດຕາມຜູ້ໂດຍສານ (Tracking Watch) ແລະ ກັກໂຕຢູ່ໂຮງແຮມ ແລະ ສະຖານທີ່ທີ່ໄດ້ຮັບອະນຸຍາດເປັນເວລາ 14 ວັນຢ່າງເຄັ່ງຄັດ. ສໍາລັບ ຈຸບິນ ແມ່ນ ໃສ່ຊຸດປ້ອງກັນ PPE ແລະ ກັກໂຕ ເມື່ອປະຕິບັດຖ້ຽວບິນມອບເໝົາໄປປະເທດທີ່ມີຄວາມສ່ຽງສູງ ເຊັ່ນ ປະເທດທີ່ມີການລະບາດຢູ່ຊຸມຊົນເປັນຕົ້ນ.
3. ໃນເດືອນ ພຶດສະພາ 2021 ມີຖ້ຽວບິນມອບເໝົາ ຈໍານວນ 40 ຖ້ຽວບິນ ປະກອບມີ ເສັ້ນບິນ ສປປ ລາວ ແລະ ສ. ເກົາຫລີ (06 ຖ້ຽວບິນ); ສປປ ລາວ ແລະ ສປ ຈີນ (29 ຖ້ຽວບິນ), ແລະ ສປປ ລາວ ແລະ ປະເທດມາເລເຊຍ (5 ຖ້ຽວບິນ).
4. ສໍາລັບ ລັດວິສາຫະກິດການບິນລາວ ໄດ້ປະຕິບັດຖ້ຽວບິນຄື ເສັ້ນທາງວຽງຈັນ-ຄຸນໝິງ-ວຽງຈັນ ຈໍານວນ 2 ຖ້ຽວ ຕໍ່ອາທິດ; ເສັ້ນທາງວຽງຈັນ-ອິນຊອນ-ວຽງຈັນ ຈໍານວນ 2 ຖ້ຽວຕໍ່ເດືອນ ແລະ ຖ້ຽວບິນເໝົາຂົນສົ່ງສິນຄ້າເສັ້ນທາງ ວຽງຈັນ-ບາງກອກ-ວຽງຈັນ ໃຫ້ໄດ້ 1 ຖ້ຽວຕໍ່ອາທິດ, ໂດຍໃຫ້ປະຕິບັດມາດຕາການຄວບຄຸມ ຕ້ານການລະບາດຂອງພະຍາດໂກວິດ-19 ທີ່ຄະນະສະເພາະກິດກໍານົດອອກເຂັ້ມງວດ.

❖ ມາດຕະການໄລຍະສັ້ນຂອງລັດວິສາຫະກິດການບິນລາວ:

- ໄດ້ແຕ່ງຕັ້ງຄະນະສະເພາະກິດເພື່ອຕິດຕາມ ແລະ ວິເຄາະສະຖານະການຢ່າງໃກ້ຊິດທຸກອາທິດ.

- ໄດ້ອອກຄຳສັ່ງແນະນຳ ວ່າດ້ວຍການເພີ່ມທະວີມາດຕະການສະກັດກັ້ນ ແລະ ຄວບຄຸມການແຜ່ລະບາດຂອງພະຍາດໂຄວິດ-19 ຂອງ ລັດວິສາຫະກິດການບິນລາວ,ສະບັບເລກທີ 060/ກບລ, ລົງວັນທີ 22/04/2021.
- ປັບປຸງແຜນທຸລະກິດຂອງການບິນລາວຄືນໃໝ່ ເພື່ອໃຫ້ສອດຄ່ອງກັບສະພາບການປ່ຽນແປງໃນປະຈຸບັນ.
- ການປະຕິບັດເງິນເດືອນຂອງພະນັກງານໃນປະຈຸບັນຍັງເປັນເງິນເດືອນທີ່ບໍ່ເຕັມອັດຕາ ແລະ ຍັງຈະປະຕິບັດມາດຕະການຫຼຸດຜ່ອນເງິນເດືອນພະນັກງານ ໃນຊ່ວງວິກິດການທາງດ້ານການເງິນລົງຕື່ມອີກ.

**II. ວຽກງານນ້ຳປະປາ.**

ໄດ້ຊີ້ນຳໃຫ້ກົມນ້ຳປະປາຄົ້ນຄວ້າ ປະສານສົມທົບຜູ້ສະໜອງນ້ຳປະປາ ມີນະໂຍບາຍຜ່ອນຜັນ ໃນການຊົມໃຊ້ນ້ຳປະປາ ປະເພດຄົວເຮືອນ ແລະ ນອກຄົວເຮືອນ ເພື່ອແນໃສ່ຫຼຸດຜ່ອນຜົນກະທົບຈາກການລະບາດຂອງພະຍາດCOVID-19. ຜ່ານການຄົ້ນຄວ້າ ເອກະພາບດ້ານນະໂຍບາຍແນວໃດແລ້ວ ຈຶ່ງຈະໄດ້ຮີບຮ້ອນລາຍງານຂໍການຊີ້ນຳຕື່ມ.

**III. ພາກສະເໜີ:**

1. ສະເໜີກ່ຽວກັບການອອກມາດຕາການກ່ຽວກັບການຂົນສົ່ງສິນຄ້າ ຂອງພາກສ່ວນຕ່າງໆໃນຂອບເຂດທົ່ວປະເທດ ໃຫ້ມີຄວາມເປັນເອກະພາບກັນ ເພື່ອສະດວກໃນການປະຕິບັດ ການຂົນສົ່ງສິນຄ້າອຸປະໂພກ ແລະ ບໍລິໂພກ ໃຫ້ສະໜອງພຽງພໍ ກັບຄວາມຮຽກຮ້ອງຕ້ອງການຂອງພາຍໃນປະເທດ.
2. ສະເໜີໃຫ້ລັດວິສາຫະກິດການບິນລາວ ສືບຕໍ່ປະຕິບັດຖ້ຽວບິນເສັ້ນທາງທາງປະເທດຄືເກົ່າ ຄື: ເສັ້ນທາງວຽງຈັນ-ຄຸນໝິງ-ວຽງຈັນ ຈຳນວນ 2 ຖ້ຽວຕໍ່ອາທິດ; ເສັ້ນທາງວຽງຈັນ-ອິນຊອນ-ວຽງຈັນ ຈຳນວນ 2 ຖ້ຽວຕໍ່ເດືອນ ແລະ ຖ້ຽວບິນເໝົາຂົນສົ່ງສິນຄ້າ ເສັ້ນທາງ ວຽງຈັນ-ບາງກອກ-ວຽງຈັນ 2 ຖ້ຽວຕໍ່ອາທິດ ເພື່ອປະຄອງທຸລະກິດບໍ່ໃຫ້ຢຸດສະງັກ ເພື່ອຂົນສົ່ງສິນຄ້າ ແລະ ຜູ້ໂດຍສານທີ່ມີຄວາມຈຳເປັນສູງ.
3. ສະເໜີຂໍຮັບເງິນອຸດໜູນວ່າງງານຂອງພະນັກງານ ລັດວິສາຫະກິດການບິນລາວ ໃນໄລຍະໂຈະການປະຕິບັດຖ້ຽວບິນເປັນເວລາ 2 ເດືອນ ຈາກຫ້ອງການກອງທຶນປະກັນສັງຄົມແຫ່ງຊາດຕາມລະບຽບການ.

ເຊັນແທນ ລັດຖະມົນຕີ

ລັນ ແສງອາພອນ